ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

----------------

ກະຊວງກະສິກຳ ແລະ ປ່າໄມ້

ເລກທີ : 0369...ປ /ກປ.2005.

ທີ່ ນະຄອນຫລວງວຽງຈັນ, ວັນທີ 06 MAY 2005

# ຄຳສັ່ງ

## ຂອງ ລັດຖະມົນຕີວ່າການກະຊວງກະສິກຳ ແລະ ປ່າໄມ້ ວ່າດ້ວຍ ການກວດກາ ແລະ ຄຸ້ມຄອງ ຄຸນນະພາບອາຫານສັດ

ເຖິງ: ທ່ານ ຫົວໜ້າພະແນກກະສິກຳ ແລະ ປ່າໄມ້ ແຂວງ, ນະຄອນຫຼວງ ແລະ ເຂດພິເສດ, ບັນ ດາຜູ້ປະກອບການ ທຸລະກິດອາຫານສັດ, ຜະລິດແລະ ປຸງແຕ່ງອາຫານສັດ.

- ອີງຕາມ ກົດໝາຍ ວ່າດວັຍກະສິກຳ ເລກທີ 01/98/ສພຊ, ລົງວັນທີ 10/10/1995, ມາດຕາ 52 ຝຸ່ນ ແລະ ອາຫານສັດ.
- ອີງຕາມ ດຳລັດນາຍົກລັດຖະມົນຕີ ເລກທີ 89/ນຍ, ລົງວັນທີ 22/6/1999 ວ່າດ້ວຍ ການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງກະຊວງກະສິກຳ ແລະ ປ່າໄມ້.
- ອີງຕາມຂໍ້ຕົກລົງ ຂອງລັດຖະມົນຕີວ່າການກະຊວງກະສິກຳ ແລະ ປ່າໄມ້ ວ່າດ້ວຍການຮັບຮອງ ແລະ ປະກາດ ໃຊ້ປື້ມຄູ່ມືມາດຖານຄຸນນະພາບອາຫານສັດ ແລະ ສູດອາຫານສັດປະເພດຕ່າງໆ ເລກທີ 0380/ກປ.2001, ລົງວັນທີ 14/5/2001.

ໃນຊຸມປີ 1998-2003 ວຽກງານລ້ຽງສັດ ແລະ ລ້ຽງປາ ໄດ້ມີທ່າກ້າວຂະຫຍາຍຕົວອອກ ຢ່າງເປັນຂະບວນກວ້າງຂວາງ ຮູບແບບການຜະລິດໄດ້ມີການຫັນປ່ຽນ ຈາກການຜະລິດແບບທຳມະຊາດ ໄປສູ່ການຜະລິດແບບມີການຄຸ້ມຄອງ, ແບບເປັນຟາມ ຫລື ແບບອຸດສາຫະກຳເທື່ອລະກ້າວ ໂດຍສະເພາະແລ້ວ ແມ່ນການລ້ຽງໝູ, ເປັດ, ໄກ່ໄຂ່, ໄກ່ຊີ້ນ, ນົກກະທາ ແລະ ປາກະຊັງເປັນຕົ້ນ, ເຮັດໃຫ້ຄວາມຕອ້ງການທາງ ດ້ານອາຫານສັດ, ປາ ນັບມື້ນັບສູງຂຶ້ນ ເຊັ່ນ; ໃນທ້າຍ ປີ 2003 ມີຄວາມຕອ້ງການສູງ ເຖິງ 24 ຫາ 25.000 ໂຕນ ໃນນັ້ນ, ມີທັງຜະລິດຢູ່ພາຍໃນ ແລະ ນຳເຂົ້າມາຈາກຕ່າງປະເທດຈຳນວນນຶ່ງ. ເພື່ອຕອບສະໜອງໄດ້ກັບຄວາມຮຽກຮອ້ງຕອ້ງການດັ່ງກ່າວ ພອ້ມທັງຫລຸດຜ່ອນການນຳເຂົ້າອາຫານສັດ, ປາ ຈາກຕ່າງປະເທດ/

ທັງເປັນການສ້າງເງື່ອນ ໄຂທີ່ດີ ແລະ ກະຕຸກຊຸກຍູ້ ການຜະລິດອາຫານສັດຢູ່ພາຍໃນປະເທດ ໃຫ້ຮັບ ປະກັນທັງດ້ານປະລິມານ ແລະ ຄຸນນະພາບ ຕາມຄວາມຮຽກຮ້ອງຕ້ອງການຊົມໃຊ້ພາຍໃນປະເທດ ຂອງຊາວກະສິກອນ ເພື່ອສະໜອງການຜະລິດສັດທຸກໆປະເພດ, ປາ ໃຫ້ພຽງພໍກັບຄວາມຕ້ອງການບໍລິໂພກພາຍໃນ ແລະ ກາຍເປັນການຜະລິດເປັນສິນຄ້າສົ່ງອອກໃນ ອະນາຄົດ.

ລັດຖະມົນຕີ ວ່າການກະຊວງກະສິກໍາ ແລະ ປ່າໄມ້ ອອກຄໍາສັ່ງດັ່ງນີ້:

1. ໃຫ້ພະແນກກະສິກໍາ ແລະ ປ່າໄມ້ແຂວງ, ນະຄອນຫຼວງ ແລະ ເຂດພິເສດ ຊີ້ນໍາຂະແໜງລ້ຽງສັດ ແລະ ການປະມົງ ລົງສົມທົບກັບພາກສ່ວນກ່ຽວຂ້ອງຂັ້ນທ້ອງຖິ່ນ ຈັດຕັ້ງໂຄສະນາ ເຜີຍແຜ່ ແລະ ສຶກສາອົບຮົມ ໃຫ້ຜູ້ປະກອບການດ້ານອາຫານສັດທີ່ຜະລິດ, ປຸງແຕ່ງ, ຈໍາໜ່າຍ, ສົ່ງອອກ-ນໍາເຂົ້າ ຜະລິດຕະພັນອາຫານສັດຈາກຕ່າງປະເທດ ຕ້ອງມີຄວາມຮັບຜິດຊອບ ແລະ ຮັບປະກັນຕໍ່ຄຸນນະພາບຜະລິດຕະພັນອາຫານສັດຂອງຕົນໃຫ້ຖືກຕ້ອງ ຕາມປື້ມຄູ່ມືມາດຕະຖານຄຸນນະພາບອາຫານສັດ ແລະ ສູດອາຫານປະເພດຕ່າງໆທີ່ໄດ້ກໍານົດໄວ້.

2. ໃຫ້ຂະແໜງລ້ຽງສັດ ແລະ ການປະມົງ ລົງຕິດຕາມກວດກາ ແລະ ເກັບເອົາຕົວຢ່າງຜະລິດຕະພັນອາຫານສັດ ທີ່ຜະລິດ, ປຸງແຕ່ງ, ສົ່ງອອກ ແລະ ນໍາເຂົ້າ ຈາກຕ່າງປະເທດ ສົ່ງໄປວິໄຈຄຸນນະພາບຢູ່ຫ້ອງວິໄຈອາຫານສັດ, ກົມລ້ຽງສັດ ແລະ ການປະມົງ ເພື່ອພິສູດ ແລະ ຢັ້ງຢືນຄຸນນະພາບ ຕາມມາດຕະຖານຄຸນນະພາບອາຫານສັດ ທີ່ກະຊວງກະ ສິກໍາ ແລະ ປ່າໄມ້ ໄດ້ຮັບຮອງ ແລະ ປະກາດໃຊ້.

3. ຜູ້ປະກອບການດ້ານອາຫານສັດ ທີ່ຜະລິດ, ປຸງແຕ່ງ, ຈໍາໜ່າຍ, ສົ່ງອອກ-ນໍາເຂົ້າ ຜະລິດຕະພັນອາຫານສັດຈາກຕ່າງປະເທດ ຕ້ອງອໍານວຍຄວາມສະດວກ ພ້ອມທັງສະໜອງເອກະສານ ແລະ ຕົວຢ່າງຜະລິດຕະພັນອາຫານສັດ ໃຫ້ເຈົ້າໜ້າທີ່ ທີ່ລົງກວດກາ ພອ້ມທັງເສຍຄ່າບໍລິການ ກວດກາ ແລະ ວິໄຈຄຸນນະພາບຜະລິດຕະພັນ ອາຫານສັດໃນແຕ່ລະຊຸດ.

4. ຜູ້ປະກອບການ ທຸລະກິດອາຫານສັດ ຕ້ອງປະຕິບັດຕາມລະບຽບຫລັກການ ກວດກາ ແລະ ຄຸ້ມຄອງຄຸນນະພາບ ອາຫານສັດ ທີ່ກະຊວງກະສິກໍາ ແລະ ປ່າໄມ້ວາງອອກ, ຫ້າມນໍາໃຊ້ວັດຖຸດິບທີ່ເສຍຄຸນ, ບໍ່ໄດ້ມາດຕະຖານ, ປອມປົນທາງວັດຖຸ, ປົນເປື້ອນທາງເຄມີ, ຢາຕ້ານເຊື້ອ, ສານກະຕຸ້ນທີ່ຕ້ອງຫ້າມ ແລະ ສິ່ງປົນເປື້ອນທາງຊີວະອື່ນໆ ເຂົ້າໃນການປຸງແຕ່ງຜະລິດອາຫານສັດ ແລະ ຫ້າມນໍາເຂົ້າ ແລະ ຈໍາໜ່າຍອາຫານສັດທີ່ເສຍຄຸນ, ບໍ່ໄດ້ມາດຖານ, ບໍ່ມີເຄື່ອງໝາຍການຄ້າ ແລະ ບໍ່ມີໃບຢັ້ງຢືນຄຸນນະພາບ

5. ໃນກໍລະນີ ທີ່ຜະລິດຕະພັນອາຫານສັດ ທີ່ໄດ້ຈຳໜ່າຍໄປແລ້ວ ຫາກເປັນສາເຫດສ້າງຄວາມເສັຍຫາຍ ໃຫ້ແກ່ຊາວກະສິກອນຜູ້ລ້ຽງສັດ ເຊິ່ງໄດ້ຮັບການພິສູດ ຢັ້ງຢືນຈາກຫໍວິໄຈອາຫານສັດ ເຈົ້າຂອງຜະລິດຕະພັນ ຕ້ອງເປັນຜູ້ຮັບຜິດຊອບ ທົດແທນຄ່າເສັຍຫາຍທີ່ເກີດຂຶ້ນນັ້ນທັງໝົດ.

6. ໃຫ້ກົມລ້ຽງສັດ ແລະ ການປະມົງ ກວດກາວິໄຈ ແລະ ອອກໃບຢັ້ງຢືນຄຸນນະພາບ ຂອງຜະລິດຕະພັນອາຫານສັດ ທີ່ຜະລິດ, ປຸງແຕ່ງ ແລະ ຈຳໜ່າຍ ພ້ອມທັງຂຶ້ນທະບຽນສູດອາຫານສັດປະເພດຕ່າງໆ ໃຫ້ແກ່ຜູ້ປະກອບການຜະລິດອາຫານສັດ ຢູ່ພາຍໃນປະເທດ.

7. ຖ້າຫາກການຈັດຕັ້ງ ຫຼື ບຸກຄົນໃດ ຫາກລະເມີດ ຕໍ່ຄຳສັ່ງສະບັບນີ້ ຈະຖືກກ່າວເຕືອນ, ປັບໃໝ ຫຼື ຖືກລົງໂທດ ຕາມລະບຽບກົດໝາຍ ທີ່ລັດຖະບານປະກາດໃຊ້.

ເມື່ອໄດ້ຮັບຄຳສັ່ງສະບັບນີ້ແລ້ວ ຈົ່ງພ້ອມກັນຄົ້ນຄວ້າ ແລະ ນຳໄປຈັດຕັ້ງປະຕິບັດ ດ້ວຍຄວາມຮັບຜິດຊອບສູງ.

ຮ. ລັດຖະມົນຕີ ວ່າການກະຊວງກະສິກຳ ແລະ ປ່າໄມ້.

ກະຊວງກະສິກຳແລະປ່າໄມ້ ລັດຖະມົນຕີ

ດຣ. ຕີ ພົມມະສັກ

__ບ່ອນນຳສົ່ງ:__

- ຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ 1 ສະບັບ.
  " ເພື່ອໃຊ້ຕາງລາຍງານ "
- ກະຊວງຖະແຫລງຂ່າວ ແລະ ວັດທະນະທຳ 1 ສະບັບ.
  " ເພື່ອຊາບ ແລະ ອອກຂ່າວ "
- ຫ້ອງວ່າການປົກຄອງແຂວງ, ນະຄອນແລະເຂດພິເສດ 1 ສະບັບ.
  " ເພື່ອຊ່ວຍຊີ້ນຳ ຈັດຕັ້ງປະຕິບັດ "
- ກົມ, ກອງ, ສູນ, ສະຖາບັນອອ້ມຂ້າງກະຊວງ/ກປ 1 ສະບັບ.
  " ເພື່ອຊາບ"
- ກົມລ້ຽງສັດ ແລະການປະມົງ 1 ສະບັບ.
  " ເພື່ອຈັດຕັ້ງປະຕິບັດ ແລະ ຕິດຕາມ "
- ເກັບມ້ຽນ 1 ສະບັບ.